ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

ທະນາຄານແຫ່ງ ສປປ ລາວ ເລກທີ 1196 /ທຫລ

ນະຄອນຫຼວງວຽງຈັນ, ວັນທີ 31 DEC 2019

# ຂໍ້ຕົກລົງ
# ວ່າດ້ວຍອັດຕາເບັ້ຍປະກັນເງິນຝາກ

- ອີງຕາມ ກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ (ສະບັບປັບປຸງ) ສະບັບເລກທີ 47/ສພຊ, ລົງວັນທີ 19 ມິຖຸນາ 2018;
- ອີງຕາມ ດຳລັດວ່າດ້ວຍການປົກປ້ອງເງິນຝາກ ສະບັບເລກທີ 329/ລບ, ລົງວັນທີ 25 ຕຸລາ 2017;
- ອີງຕາມ ການສະເໜີຂອງສຳນັກງານປົກປ້ອງເງິນຝາກ.

## ຜູ້ວ່າການທະນາຄານແຫ່ງ ສປປ ລາວ ຕົກລົງ:

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ວາງອອກເພື່ອຜັນຂະຫຍາຍ ມາດຕາ 35 ແລະ ມາດຕາ 36 ຂອງດຳລັດວ່າດ້ວຍການປົກປ້ອງເງິນຝາກ ເພື່ອໃຫ້ສອດຄ່ອງກັບສະພາບການຂະຫຍາຍຕົວຂອງເສດຖະກິດ-ສັງຄົມ ແລະ ສາມາດຈັດຕັ້ງປະຕິບັດຢ່າງເປັນເອກະພາບ ໃນຂອບເຂດສະຖາບັນການເງິນທີ່ເປັນສະມາຊິກຂອງສຳນັກງານປົກປ້ອງເງິນຝາກ.

**ມາດຕາ 2 ອັດຕາເບັ້ຍປະກັນເງິນຝາກ**

ສະມາຊິກຂອງສຳນັກງານປົກປ້ອງເງິນຝາກ ຕ້ອງຈ່າຍເບັ້ຍປະກັນເງິນຝາກໃຫ້ສຳນັກງານປົກປ້ອງເງິນຝາກ ໃນອັດຕາ ສູນຈຸດໜຶ່ງສ່ວນຮ້ອຍ (0,1%) ຂອງຍອດເຫຼືອເງິນຝາກທີ່ໄດ້ຮັບການປົກປ້ອງສະເລ່ຍຕໍ່ປີ ຊຶ່ງລວມທຸກສະກຸນເງິນທຽບເທົ່າກີບ ຕາມອັດຕາແລກປ່ຽນປິດບັນຊີທ້າຍເດືອນ ຂອງສະມາຊິກ.

**ມາດຕາ 3 ການຄິດໄລ່ ແລະ ຈ່າຍເບັ້ຍປະກັນເງິນຝາກ**

ສະມາຊິກຂອງສຳນັກງານປົກປ້ອງເງິນຝາກ ເປັນເຈົ້າການຄິດໄລ່ ແລະ ຈ່າຍເບັ້ຍປະກັນເງິນຝາກໃຫ້ສຳນັກງານປົກປ້ອງເງິນຝາກ ສີ່ (04) ຄັ້ງຕໍ່ປີ ໂດຍແບ່ງອອກເປັນແຕ່ລະໄຕມາດຂອງປີການບັນຊີ ຕາມອັດຕາ ທີ່ໄດ້ກຳນົດໄວ້ໃນ ມາດຕາ 2 ຂອງຂໍ້ຕົກລົງສະບັບນີ້ ໂດຍການໂອນເຂົ້າບັນຊີເງິນຝາກ ຂອງສຳນັກງານປົກປ້ອງເງິນຝາກ ທີ່ເປີດໄວ້ນຳທະນາຄານແຫ່ງ ສປປ ລາວ ກ່ອນວັນທີ 15 ຂອງເດືອນທຳອິດໃນໄຕມາດຖັດໄປ.

ສຳນັກງານປົກປ້ອງເງິນຝາກ ເປັນຜູ້ອອກຄຳແນະນຳເພີ່ມເຕີມ ກ່ຽວກັບວິທີການ ຄິດໄລ່ ແລະ ຈ່າຍເບັ້ຍປະກັນເງິນຝາກ.

**ມາດຕາ 4 ມາດຕະການຕໍ່ຜູ້ລະເມີດ**

ສະມາຊິກຂອງສໍານັກງານປົກປ້ອງເງິນຝາກ ຫາກລະເມີດຂໍ້ຕົກລົງສະບັບນີ້ ຈະຖືກປະຕິບັດມາດຕະການ ຕາມແຕ່ລະກໍລະນີ ດັ່ງນີ້:

1. ບໍ່ຈ່າຍເບ້ຍປະກັນເງິນຝາກ ຫຼື ຈ່າຍບໍ່ຄົບຈໍານວນ ຊ້າເກີນ ສາມ (03) ວັນລັດຖະການ ຕາມທີ່ກໍານົດໄວ້ໃນ ມາດຕາ 3 ຂອງຂໍ້ຕົກລົງສະບັບນີ້ ຈະຖືກແຈ້ງເຕືອນເປັນລາຍລັກອັກສອນ;
2. ພາຍຫຼັງ ຫ້າ (05) ວັນລັດຖະການ ທີ່ຖືກແຈ້ງເຕືອນເປັນລາຍລັກອັກສອນ ແຕ່ສະມາຊິກຍັງບໍ່ຈ່າຍເບ້ຍປະກັນເງິນຝາກ ຫຼື ຈ່າຍບໍ່ຄົບຈໍານວນ ຈະຖືກປັບໃໝໃນອັດຕາ ສູນຈຸດສູນຫ້າ ສ່ວນຮ້ອຍ (0,05%) ຕໍ່ວັນ ຂອງຈໍານວນເບ້ຍປະກັນເງິນຝາກຄ້າງຈ່າຍ;
3. ບໍ່ປະຕິບັດຕາມ ຂໍ້ 2 ຂອງມາດຕານີ້ ສະມາຊິກທີ່ເປີດບັນຊີເງິນຝາກໄວ້ນໍາ ທະນາຄານແຫ່ງ ສປປ ລາວ ຈະຖືກຫັກເງິນໃນບັນຊີ ຕາມຈໍານວນເງິນເບ້ຍປະກັນເງິນຝາກທີ່ຄ້າງຈ່າຍ ແລະ ຄ່າປັບໃໝທັງໝົດນັບແຕ່ວັນຄ້າງຈ່າຍ.

**ມາດຕາ 5 ການຈັດຕັ້ງປະຕິບັດ**

ສໍານັກງານປົກປ້ອງເງິນຝາກ, ສະມາຊິກຂອງສໍານັກງານປົກປ້ອງເງິນຝາກ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 6 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດ ນັບແຕ່ວັນທີ 01 ມັງກອນ 2020 ເປັນຕົ້ນໄປ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ**

ສອນໄຊ ສິດພະໄຊ